ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ:...0.6..4./ລອທ

ນະຄອນຫຼວງວຽງຈັນ, ...26 APR 2024.....

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ເມື່ອວັນທີ 25 ເມສາ 2024 ເວລາ 14:00 ໂມງ, ຢູ່ທີ່ຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມຊັ້ນ 8 ຫ້ອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 10 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈຳນວນ 02 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 08 ທ່ານ ຖືຮຸ້ນລວມ 92,305,895 ຮຸ້ນ ຄິດເປັນ 92.31 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. **ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022**

   ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

   - ເຫັນດີ 92,305,895 ສຽງ ຄິດເປັນ 100 %
   - ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
   - ລວມ 92,305,895 ສຽງ ຄິດເປັນ 100 %

2. **ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2023 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2023**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 92,305,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 92,305,895 ສຽງ ຄິດເປັນ 100 %

3. **ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 92,305,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 92,305,895 ສຽງ ຄິດເປັນ 100 %

4. **ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2023**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 92,305,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 92,305,895 ສຽງ ຄິດເປັນ 100 %

5. **ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2024**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 92,305,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 92,305,895 ສຽງ ຄິດເປັນ 100 %

6. **ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ**

6.1 ພິຈາລະນາແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 91,920,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 91,920,895 ສຽງ ຄິດເປັນ 100 %

6.2 ພິຈາລະນາແຕ່ງຕັ້ງ ທ່ານ ພິງຖານ ພົດຈຳນົງ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 92,305,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 92,305,895 ສຽງ ຄິດເປັນ 100 %

6.3 ພິຈາລະນາແຕ່ງຕັ້ງ ທ່ານ ທະນະເສດ ມາລະວັນຟນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 84,505,895 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 84,505,895 ສຽງ ຄິດເປັນ 100 %

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ປະທານຈຶ່ງກ່າວປິດກອງປະຊຸມເວລາ 15:10 ໂມງ. ດັ່ງນັ້ນ, ຈຶ່ງຮຽນມາຍັງບັນດາທ່ານເພື່ອຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ